## 1. ເມັດພັນເຂົ້າທີ່ດີແມ່ນເມັດພັນແນວໃດ?

- ສີຂອງເມັດພັນ ເປັນສີດຽວກັນ
- ເມັດເຕັມດີແລະ ໃຫ່ຍສະເໝີ
- ບໍ່ມີເມັດພັນຊະນິດອື່ນເຈືອປົນ
- ປອດຈາກເຊື້ອພະຍາດແລະແມງໄມ້ທຳລາຍ
- ບໍ່ມີເສດຫຍ້າ, ເຟືອງ ແລະເມັດລີບປົນ
- ຄວາມງອກຕ່ຳສຸດບໍ່ຫລຸດ 80%
- ເປັນເມັດພັນທີ່ໄດ້ຈາກ R2



## 2. ການແຊ່ ແລະ ບົ່ມເມັດພັນເຂົ້າປູກ

### 2.1. ກ່ອນແຊ່

-ຄວນຕາກ 1 ແດດ ເພື່ອກະຕຸ້ນໃຫ້ເມັດເຂົ້າ ງອກດີ ແລະຝັດເອົາເມັດລີບອອກກ່ອນ.

### 2.2. ການແຊ່ເມັດພັນ

- ເອົາເມັດພັນໃສ່ກະທໍຫລືໃສ່ເປົາປ່ານ ລົງແຊ່ ນ້ຳ ແລະຄົນອີກຄັ້ງນຶ່ງ ເພື່ອເອົາເມັດລີບ ອອກ ໃຫ້ໝົດ, ຄວນແຊ່ 1 ຫາ 2 ມື້ ຫລື 24 ຫາ 48 ຊົ່ວໂມງ ແລ້ວແຕ່ເມັດພັນມີເປືອກໜາ ຫລື ບາງ, ເວລາແຊ່ໄດ້ 12-24 ຊົ່ວໂມງຄວນປ່ຽນ ນ້ຳໃໝ່ ຫລື ຄົນໃຫ້ນ້ຳເນົ່າເສັຽຈາກການແຊ່ ເມັດນັ້ນ ອອກ

-ການບົ່ມ: ບົ່ມໃນ 2 ວັນ ຫລື 48 ຊົ່ວໂມງ, ເວລາບົ່ມໄດ້ 24 ຊົ່ວໂມງຄວນປີ້ນເປົາໜຶ່ງເທື່ອ ແລະຫົດນ້ຳເພື່ອເມັດທາງໃນບໍ່ຮ້ອນເກີນໄປ, ມີຄວາມຊຸ່ມ ແລະ ງອກ ສະເໝີດີ

- ເມື່ອສັງເກດຈາວອອກດີແລ້ວເອົາໄປ ຫ່ວານ

### 2.3. ການກຽມດິນຕົກກ້າ

- ຕ້ອງເລືອກເອົາບ່ອນທີ່ມີເງື່ອນໄຂເຊັ່ນ: ສະດວກຕໍ່ການປ່ອຍນ້ຳເຂົ້າ, ອອກ. ຫຼັງຈາກນັ້ນໄຖດິນຕາກແດດໄວ້ 1 ຫາ 2 ອາທິດ ຈຶ່ງເອົານ້ຳເຂົ້າຖ້ວມແຊ່ໄວ້ປະມານ 1 ອາທິດຫຼັງຈາກຄາດດິນມຸ້ນແລ້ວຄວນຫ່ວານຝຸ່ນຄອກໃສ່ 1 ກິໂລ/ຕາແມັດ ແລ້ວປັບໜ້າດິນໃຫ້ພຽງ, ແລະແບ່ງເຮັດເປັນ ແປງ ຫຼື ເປັນໜານກ້ວາງແຕ່ 1.5-2 ແມັດ ຍາວສຸດ ແຕ່ຈະເໝາະສົມ ຂອງໄຮ່ນາແລະ ຄວນມີຮ່ອງລະບາຍ

### 2.4. ການຫວ່ານກ້າ.

- ການຫວ່ານກ້າເວລາທີ່ເໝາະສົມ ແມ່ນຕອນແລງ ທີ່ມີແສງແດດອ່ອນ, ຫວ່ານໃນອັດຕາ ແນວປູກ 100 ກຣາມ/ຕາແມັດ ຫຼື 1 ຂີດ/ຕາແມັດ ການຫວ່ານໃສ່ ດິນຕົມຫຼືເໝາະສົມແມ່ນ ໃຫ້ເມັດເຂົ້າລົງດິນ 1/2 ຫລື ເຄິ່ງເມັດ. ຫລັງຫ່ວານກ້າໄດ້ 7-10 ວັນ ຄວນເລັ່ງຝຸ່ນ ຢູເລັຍອັດຕາສ່ວນ 5 ກຼາມ/ຕາແມັດ ໃນເວລາຕົ້ນກ້າ ບໍ່ງາມ ແຕ່ຄວນລະວັງບໍ່ໃຫ້ກ້າອື້ວຍ້ອນຝຸ່ນຫລາຍ ເກີນ ໄປ ແລະ ບໍ່ຄວນຫ່ວານຝຸ່ນຊ້າ ເພາະຈະເຮັດໃຫ້ຮາກ ຍາວ ແລະ ຫລົກຍາກ. ອາຍຸກ້າໄດ້ 25 ວັນແມ່ນພໍດີ ເພື່ອນຳໄປປັກດຳໄດ້.

### 2.4. ກຽມດິນປັກດຳ

- ໄຖເທື່ອທີ 1ແຊ່ໄວ້ 2-4 ອາທິດ,ໄຖເທື່ອ 2 ກ່ອນປັກດຳ 1 ອາທິດ, ຈາກນັ້ນຄາດໃຫ້ລະອຽດແລະ ປັບໜ້າ ດິນໃຫ້ພຽງເພື່ອປັກດຳ
- ເຮັດແປງປັກດຳກ້ວາງ 5 ແມັດ, ໄລຍະຫ່າງແປງ/ແປງ 30 ຊມ ເພື່ອການບົວລະບັດໄດ້ງ່າຍ

## 3. ການປັກດຳ

- ການປັກດຳບໍ່ຄວນດຳລົງເລິກຫຼາຍປະມານ 2 ຂໍ້ມື
- ລະດັບນ້ຳປັກດຳບໍ່ໃຫ້ຫຼາຍ, ພຽງແຕ່ 2-5 ຊມ
- ໄລຍະຫ່າງ: 20 x 20 ຊມ ໃນດິນບໍ່ງາມ ແລະຄວນຫ່າງ ກວ່ານີ້ໃນນາທີ່ມີດິນງາມ, 20 - 25 ສຸມ/ຕາແມັດ ແລະປັກດຳ 2-3 ກົບ/ສຸມ
- ການປັກດຳຕ້ອງດຳເປັນແຖວ



**4. ການບົວລະບັດຮັກສາ**

- ອັດຕາຝຸ່ນໃນ 1 ເຮັກຕາປະມານ 60:30:30
- ຮອງພື້ນປະກອບມີ ຝຸ່ນຄອກ 5 ໂຕນ ຫລື 0.5 ກິໂລ/ຕາແມັດ, 200-500 ກິໂລ ປູນຂາວ ແລະ 15:15:15 ປະມານ 200 ກິໂລ/ຮຕ ຫລື 1 ກິໂລ/50 ຕາແມັດ

\+ ເລ່ງຄັ້ງທີ່ 1: ຫລັງປັກດຳໄດ້ 20-25 ວັນ, ໃສ່ຝຸ່ນຢູເລັຍ 33 ກິໂລ/ເຮັກຕາ ຫລື 1 ກິໂລ/300 ຕາແມັດ

\+ ເລ່ງຄັ້ງທີ່ 2: ຫລັງປັກດຳໄດ້ 40-45 ວັນ, ໃສ່ຝຸ່ນຢູເລັຍ 33 ກິໂລ/ເຮັກຕາ. ກ່ອນເລັ່ງຝຸ່ນຕ້ອງເສັຍຫຍ້າ ແລະຄວນໃຫ້ນ້ຳເລິກປະມານ 5-10 ຊມ

**5. ວິທີການເກັບກ່ຽວ.**

ການເກັບກ່ຽວເມັດພັນຈະນິຍົມໃຊ້ແຮງງານຄົນ ຈະໄດ້ເມັດພັນທີ່ມີຄຸນນະພາບດີ ກວ່າໃຊ້ກົນຈັກ.

***ສິ່ງທີ່ຄວນເອົາໃຈໃສ່***

- ກ່ອນການເກັບກ່ຽວເຂົ້າເມັດພັນຕ້ອງໄດ້ລົງຕັດເຂົ້າ ປົນຢ່າງນ້ອຍ 3 ຄັ້ງ ຄື: ໄລຍະແຕກກໍ, ອອກດອກ ແລະ ກ່ອນເກັບກ່ຽວ 5-7 ວັນ, ເກັບກ່ຽວເຂົ້າໃນໄລຍະທີ່ ເໝາະສົມຄື 30 ວັນ ຫຼັງການອອກດອກ ຫຼືເມື່ອສັງເກດ ເຫັນເຂົ້າສຸກແກ່ໃນຮວງປະມານ 85%, ກ່ອນເກັບກ່ຽວ 1 ອາທິດ ຄວນລະບາຍນ້ຳອອກ ເພື່ອເຮັດໃຫ້ເຂົ້າສຸກແກ່ສະໝ່ຳສະເໝີແລະສະດວກໃນການເກັບກ່ຽວ, ຄວນຕາກເຂົ້າໃນທົ່ງນາປະມານ 2-3 ແດດ

**6. ການຟາດເມັດພັນເຂົ້າແລະເກັບມ້ຽນ**

ການຟາດເຂົ້າເປັນວຽກທີ່ຕໍ່ເນື່ອງອາດຈະໄຊ້ແຮງງານຄົນ ຄວນຟາດພຽງ 2-3 ບາດ ເພື່ອໄດ້ເມັດ ເຕັມດີ ຫຼື ໃຊ້ເຄື່ອງກົນຈັກ ເຂົ້າຊ່ວຍກໍ່ໄດ້ທັງນີ້ ກໍ່ຂື້ນຢູ່ກັບປະລິມານຂອງເມັດພັນທີ່ຜະລິດ ແຕ່ບໍ່ໃຫ້ປົນກັບແນວພັນອື່ນ

**7. ເກັບຮັກສາ**

ຄວນເກັບຮັກສາໃນ ເປົາປ່ານ ຫລື ພາສະນະທີ່ສະອາດແລະເກັບໄວ້ໃນທີ່ ອາກາດຖ່າຍເທ ຫລື ລ່ວງດີ

**ກະຊວງກະສິກຳ ແລະ ປ່າໄມ້**

**ກອງສົ່ງເສີມກະສິກຳ ແລະ ປ່າໄມ້**

# ຄູ່ມືການປູກຂະຫຍາຍເມັດພັນເຂົ້າລຸ້ນ 3 ໃນລະດັບ ຊາວນາ



**ໂຄງການປັບປຸງ ລະບົບ**

**ການຂະຫຍາຍ ແລະ ແຈກຢາຍເມັດພັນເຂົ້າ**

**ໂທ: 021 740254**

ເດືອນ 5 ປີ 2009